ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ຄະນະກວດກາສູນກາງພັກ ເລກທີ 192/ຄກສພ.

ນະຄອນຫຼວງວຽງຈັນ, ວັນທີ 26 ມິຖຸນາ **2017**

# ບົດແນະນຳ

## ການປັບປຸງການຈັດຕັ້ງຄະນະກວດກາພັກ, ອົງການກວດກາລັດ ກະຊວງ-ອົງການ ແລະ ທ້ອງຖິ່ນ ( ສະບັບປັບປຸງ )

- ອີງຕາມ ກົດລະບຽບພັກປະຊາຊົນ ປະຕິວັດລາວ ສະໄໝທີ **X** ໝວດທີ **X** ມາດຕາ **45.**
- ອີງຕາມ ກົດໝາຍວ່າດ້ວຍການກວດກາລັດ ແລະ ກົດໝາຍວ່າດ້ວຍການຕ້ານການສໍ້ລາດບັງຫຼວງ(ສະບັບປັບປຸງ).
- ອີງຕາມ ກົດໝາຍວ່າດ້ວຍການປົກຄອງທ້ອງຖິ່ນ ສະບັບເລກທີ **68**/ສພຊ, ລົງວັນທີ **14** ທັນວາ **2015** (ສະບັບປັບປຸງ).
- ອີງຕາມມະຕິຕົກລົງ ຂອງກົມການເມືອງສູນກາງພັກ ສະບັບເລກທີ **021/**ກມສພ, ລົງວັນທີ **27** ທັນວາ **2016** ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວ ຂອງຄະນະກວດກາສູນກາງພັກ ແລະ ດຳລັດ ຂອງນາຍົກລັດຖະມົນຕີ ສະບັບເລກທີ **146**/ນຍ, ລົງວັນທີ **08** ພຶດສະພາ **2017** ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວ ຂອງອົງການກວດກາລັດຖະບານ.

ໃນໄລຍະຜ່ານມາຄະນະພັກ, ອົງການປົກຄອງຂັ້ນຕ່າງໆ ໄດ້ມີການຊີ້ນຳ-ນຳພາປັບປຸງກົງຈັກການຈັດຕັ້ງ, ພາລະບົດບາດ ຂອງຄະນະກວດກາພັກ, ອົງການກວດກາລັດຂັ້ນຂອງຕົນ ຕາມກົດລະບຽບຂອງພັກ ແລະ ກົດໝາຍ ວ່າດ້ວຍການກວດກາລັດ; ແຕ່ພ້ອມດຽວກັນນັ້ນ ຜ່ານການຈັດຕັ້ງປະຕິບັດ ບົດແນະນຳສະບັບ ເລກທີ **527**/ຄກສພ ກ່ຽວກັບການປັບປຸງການຈັດຕັ້ງ ຂອງຄະນະກວດກາພັກ-ອົງການກວດກາລັດ ຢູ່ກະຊວງ-ອົງການ ແລະ ທ້ອງຖິ່ນ ຈຳນວນໜຶ່ງເຫັນວ່າການປະກອບຄະນະກວດກາ, ພະນັກງານຜູ້ເຮັດວຽກງານກວດກາບໍ່ທັນພຽງພໍ, ກົງຈັກການຈັດ ຕັ້ງບໍ່ທັນໄດ້ຮັບການປັບປຸງເປັນລະບົບ. ດັ່ງນັ້ນ, ເພື່ອເຮັດໃຫ້ການຈັດຕັ້ງ ຂອງຄະນະກວດກາພັກ, ອົງການກວດ ກາລັດແຕ່ລະຂັ້ນ ໄດ້ຮັບການປັບປຸງຕາມທິດມະຕິກອງປະຊຸມໃຫຍ່ຄັ້ງທີ **X** ຂອງພັກ ແລະ ກົດໝາຍ ວ່າດ້ວຍ ການກວດກາລັດ ຄະນະກວດກາສູນກາງພັກ ຈຶ່ງອອກບົດແນະນຳດັ່ງນີ້:

## I. ລະບົບການຈັດຕັ້ງ ຂອງຄະນະກວດກາພັກ, ອົງການກວດກາລັດ ແລະ ອົງການຕ້ານການສໍ້ລາດບັງ ຫຼວງແຕ່ລະຂັ້ນ:

### 1. ລະບົບການຈັດຕັ້ງ ຂອງຄະນະກວດກາພັກປະກອບມີ:

- ຄະນະກວດກາສູນກາງພັກ.
- ຄະນະກວດກາພັກກະຊວງ-ອົງການທຽບເທົ່າກະຊວງ.
- ຄະນະກວດກາພັກແຂວງ, ນະຄອນຫຼວງ.
- ຄະນະກວດກາພັກເມືອງ, ເທດສະບານ, ນະຄອນ.
- ຄະນະກວດກາພັກ ຄະນະພັກຮາກຖານ.
- ຄະນະກວດກາໜ່ວຍພັກ ຫຼື ຜູ້ຮັບຜິດຊອບວຽກງານກວດກາ ຂອງໜ່ວຍພັກ.

**ສະເພາະລະບົບການຈັດຕັ້ງ ຂອງຄະນະກວດກາພັກ ກຳລັງປ້ອງກັນຊາດ ແລະ ປ້ອງກັນຄວາມສະຫງົບ ປະກອບມີ:**

- ຄະນະກວດກາພັກ ກະຊວງ.
- ຄະນະກວດກາພັກ ກົມໃຫຍ່ ແລະ ທຽບເທົ່າ.
- ຄະນະກວດກາພັກ ກົມກອງ ແລະ ທຽບເທົ່າ.
- ຄະນະກວດກາພັກ ຄະນະພັກຮາກຖານ.
- ຄະນະກວດກາໜ່ວຍພັກ ຫຼື ຜູ້ຮັບຜິດຊອບວຽກງານກວດກາຂອງໜ່ວຍພັກ.

**2. ລະບົບການຈັດຕັ້ງ ຂອງອົງການກວດກາລັດ ແລະ ອົງການຕ້ານການສໍ້ລາດບັງຫຼວງແຕ່ລະຂັ້ນ:**

**2.1. ລະບົບການຈັດຕັ້ງຂອງອົງການກວດກາລັດ ແລະ ຕ້ານການສໍ້ລາດບັງຫຼວງ ຕາມຂັ້ນບໍລິຫານການປົກ ຄອງປະກອບມີ:**

- ອົງການກວດກາລັດຖະບານ.
- ອົງການກວດກາລັດແຂວງ ແລະ ນະຄອນຫຼວງ.
- ອົງການກວດກາລັດເມືອງ, ເທດສະບານ, ນະຄອນ.
- ໜ່ວຍງານກວດກາລັດບ້ານ.

**2.2. ລະບົບການຈັດຕັ້ງ ຂອງອົງການກວດກາລັດ ຕາມຂະແໜງການປະກອບມີ:**

- ກົມກວດກາກະຊວງ ແລະ ບັນດາອົງການທຽບເທົ່າກະຊວງ.
- ກົມກວດກາລັດ (ກົມນ້ອຍ) ຂອງກົມໃຫຍ່ ແລະ ທຽບເທົ່າ ຂອງກະຊວງປ້ອງກັນປະເທດ, ກະຊວງປ້ອງ ກັນຄວາມສະຫງົບ.
- ພະແນກກວດກາລັດ ຂອງບັນດາກົມ, ຫ້ອງການ, ກົມກອງ, ສະຖາບັນ, ລັດວິສາຫະກິດ ທີ່ຂຶ້ນກັບ ກະຊວງ-ອົງການທຽບເທົ່າກະຊວງ.
- ພະແນກກວດກາ ຫຼື ຫ້ອງການກວດກາລັດ ຂອງມະຫາວິທະຍາໄລ-ສະຖາບັນການສຶກສາ.
- ຂະແໜງກວດກາລັດ ຂອງບັນດາພະແນກການອ້ອມຂ້າງແຂວງ, ນະຄອນຫຼວງ ແລະ ທຽບເທົ່າ.
- ໜ່ວຍງານກວດກາລັດ ຂອງບັນດາຫ້ອງການອ້ອມຂ້າງເມືອງ.

## II. ການເລືອກຕັ້ງຄະນະກວດກາພັກ, ການສ້າງຕັ້ງອົງການກວດກາລັດ-ອົງການຕ້ານການສໍ້ລາດບັງຫຼວງ ແລະ ໂຄງປະກອບບຸກຄະລາກອນ:

**1. ການເລືອກຕັ້ງ ແລະ ໂຄງປະກອບບຸກຄະລາກອນ ຂອງຄະນະກວດກາພັກ:**

**1.1. ການເລືອກຕັ້ງ ຄະນະກວດກາພັກ:**

ຄະນະກວດກາພັກ, ປະທານ ແລະ ຮອງປະທານຄະນະກວດກາພັກຂັ້ນໃດ ແມ່ນກອງປະຊຸມຄົ້ງປະຖົມ ມະລຶກ ຂອງຄະນະບໍລິຫານງານພັກຂັ້ນນັ້ນເປັນຜູ້ເລືອກຕັ້ງ, ບ່ອນໃດມີຄະນະປະຈໍາພັກ ໃຫ້ເລືອກຕັ້ງເອົາສະ ຫາຍຮອງເລຂາພັກ ຫຼື ກໍາມະການປະຈໍາພັກເປັນປະທານ, ບ່ອນໃດບໍ່ມີຄະນະປະຈໍາພັກ ໃຫ້ເລືອກຕັ້ງເອົາສະຫາຍ ຮອງເລຂາພັກ ຫຼື ກໍາມະການພັກເປັນປະທານ; ຮອງປະທານຄະນະກວດກາພັກ ໃຫ້ເລືອກຕັ້ງເອົາຢູ່ໃນກໍາມະການ ພັກແຕ່ **1-2** ສະຫາຍ ແລະ ອີກຈໍານວນໜຶ່ງເລືອກເອົາຜູ້ທີ່ບໍ່ແມ່ນກໍາມະການ ໃນຄະນະພັກ, ດ້ວຍການລົງຄະ ແນນສຽງປິດລັບໂດຍກົງ ແລະ ນັບຄະແນນສຽງເປີດເຜີຍ ຫຼື ດ້ວຍວິທີຍົກມືຮັບຮອງເອົາ.

**1.2. ໂຄງປະກອບບຸກຄະລາກອນ ຂອງຄະນະກວດກາພັກແຕ່ລະຂັ້ນ:**

- ຄະນະກວດກາພັກກະຊວງ-ອົງການທຽບເທົ່າກະຊວງ, ແຂວງ, ນະຄອນຫຼວງ ແລະ ເມືອງ ໃຫ້ປະ ກອບມີປະທານ **1** ສະຫາຍ, ຮອງປະທານ ແຕ່ **2** ຫາ **3** ສະຫາຍ.
- ຄະນະກວດກາພັກກົມໃຫຍ່ ແລະ ທຽບເທົ່າ ໃນກໍາລັງປະກອບອາວຸດໃຫ້ປະກອບມີປະທານ **1** ສະຫາຍ, ຮອງປະທານ **2** ຫາ **3** ສະຫາຍ.
- ຄະນະກວດກາພັກຂອງຄະນະພັກຮາກຖານ ໃຫ້ປະກອບປະທານ **1** ສະຫາຍ, ມີຮອງປະທານ **2** ສະ ຫາຍ; ໜ່ວຍພັກໃດ ມີສະມາຊິກພັກແຕ່ **15** ສະຫາຍຂຶ້ນໄປ ໃຫ້ເລືອກຕັ້ງເອົາປະທານ **1** ສະຫາຍ ແລະ ຮອງປະ

ທານ **1** ສະຫາຍ ແລະ ມີພະນັກງານຊ່ວຍວຽກ **2-3** ສະຫາຍ; ໜ່ວຍພັກໃດມີສະມາຊິກພັກຫຼຸດ **15** ສະຫາຍ ໃຫ້ເລືອກຕັ້ງເອົາຜູ້ຮັບຜິດຊອບວຽກງານກວດກາໜ່ວຍພັກ **1** ສະຫາຍ ແລະມີພະນັກງານຊ່ວຍວຽກ **1-2** ສະຫາຍ.

**1.3. ການຍົກຍ້າຍ, ປົດຕຳແໜ່ງ ແລະ ການເລືອກຕັ້ງທົດແທນຕຳແໜ່ງຫວ່າງຂອງຄະນະກວດກາພັກ:**

- ການຍົກຍ້າຍ ຫຼື ປົດຕຳແໜ່ງປະທານ, ຮອງປະທານ ຄະນະກວດກາພັກ ທີ່ເປັນກຳມະການປະຈຳພັກ ຫຼື ກຳມະການພັກ ແມ່ນກອງປະຊຸມຄົບຄະນະບໍລິຫານງານພັກຂັ້ນນັ້ນເປັນຜູ້ພິຈາລະນາຕົກລົງດ້ວຍຄະແນນສຽງ ສ່ວນຫຼາຍ ແລ້ວນຳສະເໜີຂໍຄຳເຫັນຈາກຄະນະພັກ ແລະ ຄະນະກວດກາພັກຂັ້ນເທິງຖັດຕົນ, ເມື່ອໄດ້ຮັບການ ເຫັນດີແລ້ວ ຈຶ່ງຈັດຕັ້ງປະຕິບັດ ຕາມຂັ້ນຕອນທີ່ໄດ້ກຳນົດໄວ້ໃນກົດລະບຽບຂອງພັກ.

- ການຍົກຍ້າຍ ຫຼື ປົດຕຳແໜ່ງຮອງປະທານຄະນະກວດກາພັກ ທີ່ບໍ່ແມ່ນກຳມະການພັກ ຕ້ອງໄດ້ຮັບການເຫັນດີຈາກຄະນະພັກຂັ້ນຕົນ ແລ້ວລາຍງານຂໍຄຳເຫັນຈາກຄະນະກວດກາພັກຂັ້ນເທິງຖັດຕົນ ເມື່ອໄດ້ຮັບການເຫັນດີແລ້ວຈຶ່ງຈັດຕັ້ງປະຕິບັດ.

- ໃນກໍລະນີຕຳແໜ່ງປະທານ, ຮອງປະທານຄະນະກວດກາພັກຂັ້ນຂອງຕົນ ຫາກຫວ່າງລົງ ຄະນະບໍລິຫານງານພັກຂັ້ນນັ້ນ ຕ້ອງດຳເນີນກອງປະຊຸມຄົບຄະນະ ເພື່ອເລືອກຕັ້ງເອົາປະທານ ຫຼື ຮອງປະທານຄະນະກວດກາພັກ ແທນໃນຕຳແໜ່ງທີ່ຫວ່າງລົງ ແລ້ວສະເໜີຄະນະພັກ ແລະ ຄະນະກວດກາຂັ້ນເທິງຖັດຕົນຮັບຮອງ.

**2. ການສ້າງຕັ້ງ, ການແຕ່ງຕັ້ງ ແລະ ໂຄງປະກອບບຸກຄະລະກອນ ຂອງອົງການກວດກາລັດ, ອົງການຕ້ານການ ສໍ້ລາດບັງຫຼວງແຕ່ລະຂັ້ນ:**

**2.1. ການສ້າງຕັ້ງ, ການແຕ່ງຕັ້ງ ແລະ ໂຄງປະກອບບຸກຄະລາກອນ ຂອງກົມກວດກາກະຊວງ-ອົງການທຽບ ເທົ່າກະຊວງ:**

- ການສ້າງຕັ້ງກົມກວດກາລັດ ຂອງກະຊວງ-ອົງການທຽບເທົ່າກະຊວງ ແມ່ນລັດຖະມົນຕີ ຫຼື ຫົວໜ້າອົງການເປັນຜູ້ຄົ້ນຄວ້າ ແລະ ນຳສະເໜີນາຍົກລັດຖະມົນຕີ ພິຈາລະນາຕົກລົງ ຄືກັບກົມອື່ນໆ ໃນກົງຈັກການຈັດຕັ້ງຂອງກະຊວງ ແລະ ອົງການຕົນ.

- ການແຕ່ງຕັ້ງ, ຍົກຍ້າຍ ຫຼື ປົດຕຳແໜ່ງ ຫົວໜ້າກົມກວດກາ ຂອງກະຊວງ ແລະ ອົງການທຽບເທົ່າ ໂດຍຜ່ານການຄົ້ນຄວ້າເຫັນດີເປັນເອກະພາບ ຂອງຄະນະພັກ ແລະ ການນຳກະຊວງ-ອົງການ ແລ້ວສະເໜີຂໍຄຳເຫັນຈາກອົງການກວດກາລັດຖະບານ ແລະ ຄະນະຈັດຕັ້ງສູນກາງພັກກ່ອນ ແລ້ວຈຶ່ງນຳສະເໜີນາຍົກລັດຖະມົນຕີຕົກລົງ.

- ການແຕ່ງຕັ້ງ, ຍົກຍ້າຍ ຫຼື ປົດຕຳແໜ່ງ ຮອງຫົວໜ້າກົມກວດກາ ແມ່ນຄະນະພັກ, ຄະນະນຳກະຊວງ-ອົງການທຽບເທົ່າ ເປັນຜູ້ຄົ້ນຄວ້າແລ້ວສະເໜີ ອົງການກວດກາລັດຖະບານ ແລະ ກະຊວງພາຍໃນພິຈາລະນາ ເມື່ອເຫັນດີເປັນເອກະພາບແລ້ວ ລັດຖະມົນຕີ ຫຼື ຫົວໜ້າອົງການ ຈຶ່ງຕົກລົງແຕ່ງຕັ້ງ.

- ໂຄງປະກອບບຸກຄະລາກອນຂອງກົມກວດກາກະຊວງ-ອົງການ ປະກອບມີ ຫົວໜ້າກົມ **1** ທ່ານ, ຮອງຫົວໜ້າກົມແຕ່ **2-4** ທ່ານ ໂດຍອີງໃສ່ຈຳນວນພົນໜ້ອຍ ຫຼື ຫຼາຍ ຕາມຄວາມເໝາະສົມ.

**2.2. ການສ້າງຕັ້ງ, ແຕ່ງຕັ້ງ ແລະ ໂຄງປະກອບບຸກຄະລາກອນ ພະແນກກວດກາລັດ ຂອງບັນດາກົມ, ຫ້ອງການ, ກົມກອງ ທີ່ຂຶ້ນກັບກະຊວງ-ອົງການທຽບເທົ່າ:**

- ບັນດາກົມ, ຫ້ອງການ, ກົມກອງ ແລະ ສະຖາບັນອື່ນໆ ທີ່ຂຶ້ນກັບກະຊວງ-ອົງການທຽບເທົ່າກະຊວງ ທີ່ມີຈຳນວນພະນັກງານ-ລັດຖະກອນ ແຕ່ **50** ຄົນຂຶ້ນໄປ ໃຫ້ສ້າງຕັ້ງພະແນກກວດກາລັດ ຫຼື ຫ້ອງການກວດກາລັດ ໂດຍແມ່ນລັດຖະມົນຕີ ຫຼື ຫົວໜ້າອົງການເປັນຜູ້ຕົກລົງ; ໃນກໍລະນີ ກົມ, ຫ້ອງການ, ກົມກອງ ແລະ ສະຖາບັນ ອື່ນໆ ທີ່ມີຈຳນວນພະນັກງານ-ລັດຖະກອນ ຫຼຸດ **50** ຄົນລົງມາ ແຕ່ຜ່ານມາໄດ້ສ້າງຕັ້ງພະແນກກວດກາລັດ ຫຼື ຫ້ອງ ການກວດກາລັດຂັ້ນຕົນແລ້ວ ກໍໃຫ້ຮັກສາໄວ້ຄືເກົ່າ.

- ການແຕ່ງຕັ້ງ, ຍົກຍ້າຍ ຫຼື ປົດຕຳແໜ່ງ, ຫົວໜ້າພະແນກ, ຮອງຫົວໜ້າ ພະແນກກວດກາລັດ ຫຼື ຫົວໜ້າ ຫ້ອງການ, ຮອງຫົວໜ້າຫ້ອງການກວດກາລັດ ຂອງບັນດາກົມ, ຫ້ອງການ, ກົມກອງ ແລະ ສະຖາບັນທີ່ຂຶ້ນ ກັບກະຊວງ-ອົງການ ແມ່ນລັດຖະມົນຕີ ຫຼື ຫົວໜ້າອົງ ການເປັນຜູ້ຕົກລົງ.

- ໂຄງປະກອບບຸກຄະລະກອນ ຂອງຫົວໜ້າພະແນກ, ຮອງຫົວໜ້າພະແນກ ຫຼື ຫົວໜ້າຫ້ອງການ, ຮອງ ຫົວໜ້າຫ້ອງການກວດກາລັດ ມີຫົວໜ້າ **1** ທ່ານ ແລະ ມີຮອງ **2** ທ່ານ.

**2.3. ການສ້າງຕັ້ງ, ການແຕ່ງຕັ້ງ ແລະ ໂຄງປະກອບບຸກຄະລາກອນ ຂອງອົງການກວດກາລັດແຂວງ-ນະ ຄອນຫຼວງ:**

- ການສ້າງຕັ້ງອົງການກວດກາລັດແຂວງ, ນະຄອນຫຼວງ ໂດຍແມ່ນເຈົ້າແຂວງ, ເຈົ້າຄອງນະຄອນຫຼວງ ເປັນຜູ້ ສະເໜີສະພາປະຊາຊົນຂັ້ນແຂວງ, ນະຄອນຫຼວງ ພິຈາລະນາຮັບຮອງ.

- ຫົວໜ້າອົງການກວດກາລັດແຂວງ, ນະຄອນຫຼວງ ຖືກແຕ່ງຕັ້ງ, ຍົກຍ້າຍ ຫຼື ປົດຕຳແໜ່ງ ໂດຍແມ່ນ ເຈົ້າແຂວງ, ເຈົ້າຄອງນະຄອນຫຼວງ ໄດ້ຄົ້ນຄວ້າເປັນເອກະພາບ ນຳອົງການກວດກາລັດຖະບານ ແລ້ວນຳສະເໜີ ສະ ພາປະຊາຊົນ ຂັ້ນແຂວງ, ນະຄອນຫຼວງພິຈາລະນາຮັບຮອງ.

- ການແຕ່ງຕັ້ງ, ຍົກຍ້າຍ ຫຼື ປົດຕຳແໜ່ງ ຮອງຫົວໜ້າ ອົງການກວດກາລັດແຂວງ, ນະຄອນຫຼວງແມ່ນ ເຈົ້າແຂວງ, ເຈົ້າຄອງນະຄອນຫຼວງ ເປັນຜູ້ແຕ່ງຕັ້ງ ຕາມການສະເໜີຂອງຫົວໜ້າອົງການກວດກາລັດແຂວງ, ນະ ຄອນຫຼວງ ແລະ ຫົວໜ້າຄະນະຈັດຕັ້ງແຂວງ, ນະຄອນຫຼວງ.

- ໂຄງປະກອບບຸກຄະລາກອນ ຂອງອົງການກວດກາລັດແຂວງ ມີຫົວໜ້າ **1** ທ່ານ ແລະ ມີຮອງຫົວໜ້າ **2** ຫາ **4** ທ່ານ.

**2.4. ການສ້າງຕັ້ງ, ການແຕ່ງຕັ້ງ ແລະ ໂຄງປະກອບບຸກຄະລາກອນ ພະແນກກວດກາລັດ ຂອງກອງບັນຊາ ການທະຫານແຂວງ, ຕາຫຼວດແຂວງ, ນະຄອນຫຼວງ.**

- ການສ້າງຕັ້ງພະແນກກວດກາລັດ ຂອງກອງບັນຊາການທະຫານແຂວງ, ຕຳຫຼວດແຂວງ, ນະຄອນຫຼວງ ໃຫ້ຂຶ້ນໂດຍກົງກັບຄະນະພັກ ແລະ ຄະນະກອງບັນຊາການ ຂອງສອງກຳລັງ.

- ການແຕ່ງຕັ້ງ, ຍົກຍ້າຍ ຫຼື ປົດຕຳແໜ່ງຫົວໜ້າ, ຮອງຫົວໜ້າພະແນກກວດກາລັດ ໃຫ້ປະຕິບັດຕາມ ລະບຽບການສະເພາະ ຂອງສອງກຳລັງ.

- ໂຄງປະກອບບຸກຄະລາກອນ ມີຫົວໜ້າພະແນກ **1** ທ່ານ, ມີຮອງຫົວໜ້າພະແນກ ແຕ່ **2** ຫາ **4** ທ່ານ.

**2.5. ການສ້າງຕັ້ງ, ແຕ່ງຕັ້ງ ແລະ ໂຄງປະກອບບຸກຄະລາກອນ ຂອງຂະແໜງກວດກາລັດ ບັນດາພະແນກ ການ ອົງການທຽບເທົ່າອ້ອມຂ້າງແຂວງ, ນະຄອນຫຼວງ:**

- ການສ້າງຕັ້ງຂະແໜງກວດກາລັດຂອງບັນດາພະແນກການ ແລະ ອົງການທຽບເທົ່າຢູ່ອ້ອມຂ້າງແຂວງ, ນະຄອນຫຼວງ ແມ່ນເຈົ້າແຂວງ, ເຈົ້າຄອງນະຄອນຫຼວງເປັນຜູ້ຕົກລົງສ້າງຕັ້ງ ຕາມການສະເໜີຂອງຫົວໜ້າພະແນກ ຫຼື ຫົວໜ້າອົງການທຽບເທົ່າ ແລະ ຫົວໜ້າກວດກາລັດແຂວງ, ນະຄອນຫຼວງ.

- ການແຕ່ງຕັ້ງ, ຍົກຍ້າຍ ຫຼື ປົດຕຳແໜ່ງ ຫົວໜ້າ, ຮອງຫົວໜ້າຂະແໜງກວດກາລັດ ບັນດາພະແນກ ການ, ອົງການທຽບເທົ່າຢູ່ອ້ອມຂ້າງແຂວງ, ນະຄອນຫຼວງ ແມ່ນເຈົ້າແຂວງ, ເຈົ້າຄອງນະຄອນຫຼວງ ເປັນຜູ້ຕົກລົງ ໂດຍແມ່ນຫົວໜ້າພະແນກ ແລະ ຫົວໜ້າອົງການກວດກາລັດແຂວງ, ນະຄອນຫຼວງ ເປັນຜູ້ສະເໜີ.

- ໂຄງປະກອບບຸກຄະລາກອນ ມີຫົວໜ້າຂະແໜງ **1** ທ່ານ, ຮອງຫົວໜ້າຂະແໜງ **1** ຫາ **2** ທ່ານ.

**2.6. ການສ້າງຕັ້ງ, ການແຕ່ງຕັ້ງ ແລະ ໂຄງປະກອບບຸກຄະລາກອນ ຂອງອົງການກວດກາລັດເມືອງ, ເທດສະບານ, ນະຄອນ:**

- ການສ້າງຕັ້ງ ອົງການກວດກາລັດເມືອງ, ເທດສະບານ, ນະຄອນ ໂດຍແມ່ນ ເຈົ້າແຂວງ, ເຈົ້າຄອງນະ ຄອນຫຼວງ ສະເໜີຄະນະປະຈຳສະພາປະຊາຊົນແຂວງ, ນະຄອນຫຼວງ ພິຈາລະນາຮັບຮອງ ຕາມການສະເໜີ ຂອງ ເຈົ້າເມືອງ.

- ການແຕ່ງຕັ້ງ, ຍົກຍ້າຍ ຫຼື ປົດຕຳແໜ່ງຫົວໜ້າອົງການກວດກາລັດເມືອງ ແມ່ນເຈົ້າເມືອງ ເປັນຜູ້ຕົກລົງ ຕາມການສະເໜີ ຂອງຫົວໜ້າຄະນະກວດກາ ແລະ ຄະນະຈັດຕັ້ງເມືອງ ພາຍຫຼັງໄດ້ມີຄວາມເປັນເອກະພາບກັບ ກວດກາລັດແຂວງ, ນະຄອນຫຼວງ.

- ການແຕ່ງຕັ້ງ, ຍົກຍ້າຍ, ປົດຕຳແໜ່ງຮອງຫົວໜ້າອົງການກວດກາລັດເມືອງ ແມ່ນເຈົ້າເມືອງ ເປັນຜູ້ຕົກລົງ ຕາມການສະເໜີຂອງຫົວໜ້າອົງການກວດກາລັດ ແລະ ຄະນະຈັດຕັ້ງເມືອງ.

- ໂຄງປະກອບບຸກຄະລາກອນ ຂອງອົງການກວດກາລັດເມືອງປະກອບມີ ຫົວໜ້າ **1** ທ່ານ, ຮອງຫົວໜ້າ **2** ຫາ **3** ທ່ານ.

**2.7. ການສ້າງຕັ້ງ, ແຕ່ງຕັ້ງ ແລະ ໂຄງປະກອບບຸກຄະລາກອນ ຂອງໜ່ວຍງານກວດກາລັດບັນດາຫ້ອງການ, ອົງການທຽບເທົ່າອ້ອມຂ້າງເມືອງ:**

- ການສ້າງຕັ້ງໜ່ວຍງານກວດກາລັດ ບັນດາຫ້ອງການ, ອົງການທຽບເທົ່າຫ້ອງການອ້ອມຂ້າງເມືອງ ແມ່ນເຈົ້າເມືອງເປັນຜູ້ຕົກລົງ ຕາມການສະເໜີຂອງຫົວໜ້າຫ້ອງການ ອົງການທຽບເທົ່າອ້ອມຂ້າງເມືອງ ພາຍຫຼັງການເຫັນດີເປັນເອກະພາບ ຂອງອົງການກວດກາລັດເມືອງ.

- ການແຕ່ງຕັ້ງ, ຍົກຍ້າຍ ຫຼື ປົດຕຳແໜ່ງ ຫົວໜ້າ, ຮອງຫົວໜ້າໜ່ວຍງານກວດກາລັດບັນດາຫ້ອງການ, ອົງການທຽບເທົ່າຫ້ອງການອ້ອມຂ້າງເມືອງ ແມ່ນເຈົ້າເມືອງເປັນຜູ້ຕົກລົງ ຕາມການສະເໜີຂອງຫົວໜ້າຫ້ອງການ, ອົງການທຽບເທົ່າຫ້ອງການອ້ອມຂ້າງເມືອງ ພາຍຫຼັງການເຫັນດີເປັນເອກະພາບ ຂອງອົງການກວດກາລັດເມືອງ.

- ໂຄງປະກອບບຸກຄະລາກອນ ປະກອບມີຫົວໜ້າໜ່ວຍງານ **1** ທ່ານ ແລະ ຮອງຫົວໜ້າໜ່ວຍງານ **1** ທ່ານ ແລະ ມີພະນັກງານຊ່ວຍວຽກຢ່າງໜ້ອຍ **2** ຄົນ.

**2.8. ການສ້າງຕັ້ງ, ແຕ່ງຕັ້ງ ແລະ ໂຄງປະກອບບຸກຄະລາກອນ ຂອງໜ່ວຍງານກວດກາລັດບ້ານ:**

- ການສ້າງຕັ້ງໜ່ວຍງານກວດກາລັດບ້ານ ໂດຍແມ່ນເຈົ້າເມືອງເປັນຜູ້ຕົກລົງ ຕາມການສະເໜີຂອງນາຍບ້ານ;

- ການແຕ່ງຕັ້ງ, ຍົກຍ້າຍ ຫຼື ປົດຕຳແໜ່ງຫົວໜ້າ, ຮອງຫົວໜ້າໜ່ວຍງານກວດກາລັດບ້ານ ແມ່ນເຈົ້າເມືອງ ເປັນຜູ້ຕົກລົງ ຕາມການສະເໜີຂອງນາຍບ້ານ ແລະ ການເຫັນດີເປັນເອກະພາບ ຂອງອົງການກວດກາລັດເມືອງ.

- ໂຄງປະກອບບຸກຄະລາກອນໜ່ວຍງານກວດກາລັດບ້ານໃຫ້ປະກອບມີ ຫົວໜ້າໜ່ວຍງານ **1** ທ່ານ, ຮອງຫົວໜ້າ **1** ທ່ານ ແລະ ພະນັກງານຊ່ວຍວຽກ **1-2** ຄົນ.

**3. ຫຼັກການຈັດຕັ້ງ ຄະນະກວດກາພັກ, ອົງການກວດກາລັດ ແລະ ອົງການຕ້ານການສໍ້ລາດບັງຫຼວງ:**

**3.1.** ຄະນະກວດກາພັກ, ອົງການກວດກາລັດ ແລະ ອົງການຕ້ານການສໍ້ລາດບັງຫຼວງທຸກຂັ້ນ ແມ່ນໃຫ້ໂຮມກັນ ເປັນອົງການດຽວ ໂດຍແມ່ນຜູ້ດຽວເປັນປະທານ ຫຼື ຫົວໜ້າ ຄວບ **3** ຕຳແໜ່ງ, ບັນດາຮອງປະທານ ຫຼື ຮອງຫົວໜ້າກໍຄວບ **3** ຕຳແໜ່ງ; ການປັບປຸງການຈັດຕັ້ງ ຂອງຄະນະກວດກາພັກ, ອົງການກວດກາລັດ ແລະ ອົງການຕ້ານການສໍ້ລາດບັງຫຼວງ ແຕ່ລະຂັ້ນໃຫ້ມີສຳນັກງານເຮັດວຽກບ່ອນດຽວ ທີ່ມີກົງຈັກຊ່ວຍວຽກເຮັດທັງ **3** ພາລະບົດບາດບໍ່ໃຫ້ແຍກ ຫຼື ສ້າງຕັ້ງເປັນ **3** ອົງການຕ່າງຫາກ.

**3.2.** ອາຍຸສະໄໝຂອງ ຄະນະກວດກາພັກ ເທົ່າກັບອາຍຸສະໄໝກອງປະຊຸມໃຫຍ່ ຂອງອົງຄະນະພັກຂັ້ນຕົນ, ອາຍຸສະໄໝ ຂອງອົງການກວດກາລັດ ແລະ ອົງການຕ້ານການສໍ້ລາດບັງຫຼວງ ຢູ່ຂັ້ນໃດກໍ່ໃຫ້ປະຕິບັດຕາມສະໄໝການເລືອກຕັ້ງ ຫຼື ແຕ່ງຕັ້ງອົງການປົກຄອງຂັ້ນນັ້ນ.

## III. ການກຳນົດກົງຈັກການຈັດຕັ້ງ, ພາລະບົດບາດ ແລະ ການປະກອບພະນັກງານ ຂອງຄະນະກວດກາ ພັກ, ອົງການກວດກາລັດແຕ່ລະຂັ້ນ:

**1. ການກຳນົດພາລະບົດບາດ, ໜ້າທີ່ ແລະ ຂອບເຂດສິດ ຂອງຄະນະກວດກາພັກແຕ່ລະຂັ້ນ.**

ພາລະບົດບາດ ຂອງຄະນະກວດກາພັກຂັ້ນໃດ ແມ່ນຄະນະພັກ ຫຼື ຄະນະປະຈຳພັກຂັ້ນນັ້ນ ເປັນຜູ້ຕົກລົງ ຕາມການສະເໜີ ຂອງຄະນະກວດກາພັກຂັ້ນຕົ້ນ ໂດຍຜ່ານອົງການທີ່ກ່ຽວຂ້ອງ.

**2. ການກຳນົດພາລະບົດບາດ, ໜ້າທີ່ ແລະ ຂອບເຂດສິດ ຂອງອົງການກວດກາລັດ ແລະ ຕ້ານການສໍ້ລາດ ບັງຫຼວງແຕ່ລະຂັ້ນ:**

ພາລະບົດບາດ ຂອງອົງການກວດກາລັດ ແລະ ຕ້ານການສໍ້ລາດບັງຫຼວງຂັ້ນໃດ ແມ່ນອົງການປົກຄອງຂັ້ນນັ້ນເປັນຜູ້ຕົກລົງ ຕາມການສະເໜີ ຂອງອົງການກວດກາລັດຂັ້ນຕົ້ນ ໂດຍສອດຄ່ອງກັບກົດໝາຍກວດກາລັດ.

**3. ການປັບປຸງກົງຈັກການຈັດຕັ້ງຂອງຄະນະກວດກາພັກ, ອົງການກວດກາລັດ ແລະ ອົງການຕ້ານການສໍ້ ລາດບັງຫຼວງ ແຕ່ລະຂັ້ນ:**

**3.1. ກົງຈັກຊ່ວຍວຽກ ຂອງຄະນະກວດກາພັກ ແລະ ກົມກວດກາກະຊວງ ປະກອບມີ:**

- ພະແນກບໍລິຫານ, ຈັດຕັ້ງ ແລະ ຄົ້ນຄວ້າສັງລວມ.
- ພະແນກກວດກາພັກ.
- ພະແນກກວດກາລັດ ແລະ ຕິດຕາມແກ້ໄຂຜົນການກວດກາ.
- ພະແນກຕ້ານການສໍ້ລາດບັງຫຼວງ ແລະ ສືບສວນ-ສອບສວນ.
- ພະແນກຄົ້ນຄວ້າຄຳຮ້ອງ ແລະ ຄຳສະເໜີ.

**3.2. ກົງຈັກຊ່ວຍວຽກ ຂອງຄະນະກວດກາພັກ ແລະ ພະແນກກວດກາລັດ ຂອງອົງການທຽບເທົ່າກະຊວງ ທີ່ຈັດຕັ້ງເປັນພະແນກກວດກາປະກອບມີ:**

- ໜ່ວຍງານບໍລິຫານ ແລະ ຄົ້ນຄວ້າສັງລວມ.
- ໜ່ວຍງານກວດກາພັກ.
- ໜ່ວຍງານກວດກາລັດ ແລະ ຕ້ານການສໍ້ລາດບັງຫຼວງ.
- ໜ່ວຍງານຄົ້ນຄວ້າຄຳຮ້ອງ ແລະ ຄຳສະເໜີ.

**3.3. ກົງຈັກຊ່ວຍວຽກ ຂອງຄະນະກວດກາພັກ, ພະແນກກວດກາລັດ ຂອງບັນດາກົມ, ຫ້ອງການ, ກົມກອງ ແລະ ສະຖາບັນ ທີ່ຂຶ້ນກັບກະຊວງ-ອົງການທຽບເທົ່າກະຊວງ ປະກອບມີ:**

- ໜ່ວຍງານບໍລິຫານ ແລະ ຄົ້ນຄວ້າສັງລວມ.
- ໜ່ວຍງານກວດກາພັກ ແລະ ຄົ້ນຄວ້າຄຳຮ້ອງ-ຄຳສະເໜີ.
- ໜ່ວຍງານກວດກາລັດ ແລະ ຕ້ານການສໍ້ລາດບັງຫຼວງ.

❖ **ໃນກໍລະນີກົມກອງ ຫຼື ສະຖາບັນການສຶກສາຢູ່ບ່ອນໃດໄດ້ຈັດຕັ້ງເປັນຫ້ອງການກວດກາລັດ ໃຫ້ປະກອບ ມີກົງຈັກ ຄື:**

-ພະແນກບໍລິຫານ-ຄົ້ນຄວ້າສັງລວມ.

-ພະແນກກວດກາພັກ.

-ພະແນກກວດກາລັດ ແລະ ຕ້ານການສໍ້ລາດບັງຫຼວງ.

-ພະແນກຄົ້ນຄວ້າຄຳຮ້ອງ ແລະ ຄຳສະເໜີ.

(ສ□າລັບເງິນອຸດໜູນຕ□າແໜ່ງໃຫ້ປະຕິບັດຕາມລະບຽບການ ທີ່ກະຊວງສຶກສາທິການ ແລະ ກິລາ ກຳນົດອອກ.)

**3.4. ກົງຈັກຊ່ວຍວຽກຂອງຄະນະກວດກາພັກ, ອົງການກວດກາລັດແຂວງ-ນະຄອນຫຼວງ ປະກອບມີ:**

- ຫ້ອງການບໍລິຫານ, ຈັດຕັ້ງ ແລະ ຄົ້ນຄວ້າສັງລວມ.
- ຂະແໜງກວດກາພັກ.
- ຂະແໜງກວດກາລັດ ແລະ ຕິດຕາມຜົນການກວດກາ.
- ຂະແໜງຕ້ານການສໍ້ລາດບັງຫຼວງ ແລະ ສືບສວນ-ສອບສວນ.
- ຂະແໜງຄົ້ນຄວ້າຄຳຮ້ອງ ແລະ ຄຳສະເໜີ.

**3.5. ກົງຈັກຊ່ວຍວຽກ ຂອງຄະນະກວດກາພັກ ຂະແໜງກວດກາລັດ ຂອງບັນດາພະແນກການ, ອົງການທຽບເທົ່າຢູ່ອ້ອມຂ້າງແຂວງ, ນະຄອນຫຼວງ ປະກອບມີ:**

- ໜ່ວຍງານບໍລິຫານ ແລະ ຄົ້ນຄ້ວາສັງລວມ.
- ໜ່ວຍງານກວດກາພັກ ແລະ ຄົ້ນຄວ້າຄຳຮ້ອງ-ຄຳສະເໜີດ້ານພັກຂອງຄະນະພັກ ແລະ ສະມາຊິກພັກ.
- ໜ່ວຍງານກວດກາລັດ, ຕ້ານການສໍ້ລາດບັງຫຼວງ ແລະ ຄົ້ນຄວ້າຄຳຮ້ອງ-ຄຳສະເໜີທົ່ວໄປ ຂອງພະນັກງານ-ລັດຖະກອນ ແລະ ພົນລະເມືອງ.

**3.6. ກົງຈັກຊ່ວຍວຽກ ຂອງຄະນະກວດກາພັກ, ພະແນກກວດກາລັດ ກອງບັນຊາການທະຫານແຂວງ ແລະ ກອງບັນຊາການປ້ອງກັນຄວາມສະຫງົບແຂວງ ປະກອບມີ:**

- ຂະແໜງບໍລິຫານ ແລະ ຄົ້ນຄວ້າສັງລວມ.
- ຂະແໜງກວດກາພັກ.
- ຂະແໜງກວດກາລັດ ແລະ ຕ້ານການສໍ້ລາດບັງຫຼວງ.
- ຂະແໜງຄົ້ນຄວ້າຄຳຮ້ອງ ແລະ ຄຳສະເໜີ.

**3.7. ກົງຈັກຊ່ວຍວຽກ ຂອງຄະນະກວດກາພັກ, ອົງການລັດເມືອງ, ເທດສະບານ, ນະຄອນ ປະກອບມີ:**

- ໜ່ວຍງານບໍລິຫານ, ຈັດຕັ້ງ ແລະ ຄົ້ນຄວ້າສັງລວມ.
- ໜ່ວຍງານກວດກາພັກ ( ຮັບຄຳຮ້ອງຄຳສະເໜີດ້ານພັກ, ຊຸກຍູ້ແກ້ໄຂຜົນການກວດກາພັກ).
- ໜ່ວຍງານກວດກາລັດ ແລະ ຕ້ານການສໍ້ລາດບັງຫຼວງ-ການສືບສວນ-ສອບສວນ, ຄົ້ນຄວ້າຄຳຮ້ອງ-ຄຳສະເໜີ ຂອງພະນັກງານ-ລັດຖະກອນ ແລະ ຂອງພົນລະເມືອງ, ຕິດຕາມ-ກວດກາການແກ້ໄຂຜົນ ຂອງການກວດກາ.

**3.8. ກົງຈັກຊ່ວຍວຽກ ຂອງຄະນະກວດກາພັກ, ໜ່ວຍງານກວດກາລັດ ບັນດາຫ້ອງການອ້ອມຂ້າງເມືອງ, ເທດສະບານ, ນະຄອນ ປະກອບມີ:**

- ຜູ້ຮັບຜິດຊອບວຽກງານກວດກາພັກ.
- ຜູ້ຮັບຜິດຊອບກວດກາລັດ ແລະ ຕ້ານການສໍ້ລາດບັງຫຼວງ.

ການຄົ້ນຄວ້າຄຳຮ້ອງ-ຄຳສະເໜີ ຕໍ່ກັບສະມາຊິກພັກ ແລະ ການຈັດຕັ້ງພັກມອບໃຫ້ຜູ້ຮັບຜິດຊອບວຽກງານກວດກາພັກ; ການຄົ້ນຄວ້າຄຳຮ້ອງ-ຄຳສະເໜີ ຕໍ່ການຈັດຕັ້ງລັດ, ພະນັກງານ-ລັດຖະກອນ ມອບໃຫ້ຜູ້ຮັບຜິດຊອບວຽກງານກວດກາລັດ.

**3.9. ກົງຈັກຊ່ວຍວຽກ ຂອງຄະນະກວດກາພັກ, ຂະແໜງກວດກາລັດ ກອງບັນຊາການທະຫານເມືອງ ແລະ ກອງບັນຊາການປ້ອງກັນຄວາມສະຫງົບເມືອງ ປະກອບມີ:**

- ໜ່ວຍງານກວດກາພັກ.
- ໜ່ວຍງານກວດກາລັດ ແລະ ຕ້ານການສໍ້ລາດບັງຫຼວງ.
- ໜ່ວຍງານຄົ້ນຄວ້າຄຳຮ້ອງ ແລະ ຄຳສະເໜີ.

**3.10. ໜ່ວຍງານກວດກາລັດບ້ານ ເຮັດໜ້າທີ່ຕິດຕາມ ກວດກາພັກ-ລັດ, ຕ້ານການສໍ້ລາດບັງຫຼວງ ແລະ ຄົ້ນ ຄວ້າຄຳຮ້ອງ-ຄຳສະເໜີ ຕາມພາລະບົດບາດ ແລະ ໜ້າທີ່ຂອງຕົນ.**

**4. ພະນັກງານ ທີ່ປະກອບເຂົ້າກົງຈັກການຈັດຕັ້ງ, ມາດຖານເງື່ອນໄຂ ຂອງຄະນະກວດກາ ແລະ ພະນັກງານ ກວດກາແຕ່ລະຂັ້ນ:**

**4.1. ພະນັກງານ ທີ່ປະກອບເຂົ້າກົງຈັກການຈັດຕັ້ງ ຂອງຄະນະກວດກາພັກ, ອົງການກວດກາລັດ ແລະ ອົງ ການຕ້ານການສໍ້ລາດບັງຫຼວງແຕ່ລະຂັ້ນ:**

ໂດຍພື້ນຖານແມ່ນໃຫ້ອີງໃສ່ການກຳນົດຕຳແໜ່ງງານ, ແຕ່ເພື່ອເປັນການກຳນົດຕົວເລກຄາດໝາຍລວມໃຫ້ ຄົ້ນຄວ້າປະຕິບັດດັ່ງນີ້:

- ຄະນະກວດກາພັກ ແລະ ກົມກວດກາກະຊວງ-ອົງການທຽບເທົ່າກະຊວງ ທີ່ມີຄະນະພັກຮາກຖານ ຂຶ້ນກັບ ໃຫ້ປະກອບພະນັກງານ ຂອງກົມກວດກາ **25** ຄົນຂຶ້ນໄປ.
- ຄະນະກວດກາພັກ ແລະ ກົມກວດກາກະຊວງ-ອົງການທຽບເທົ່າກະຊວງ ທີ່ບໍ່ມີຄະນະພັກຮາກຖານ ຂຶ້ນກັບໃຫ້ປະກອບ ພະນັກງານຂອງກົມກວດກາ **15** ຄົນຂຶ້ນໄປ.
- ຄະນະກວດກາພັກ ແລະ ພະແນກກວດກາລັດ ຂອງບັນດາອົງການທຽບເທົ່າກະຊວງ ໃຫ້ປະກອບພະ ນັກງານ **7** ຄົນຂຶ້ນໄປ.
- ຄະນະກວດກາພັກ ແລະ ຫ້ອງການກວດກາລັດ ສະຖາບັນການສຶກສາໃຫຍ່ ໃຫ້ປະກອບມີພະນັກງານ **11** ຄົນຂຶ້ນໄປ.
- ຄະນະກວດກາພັກ ແລະ ພະແນກກວດກາລັດ ຂອງບັນດາກົມ, ກອງ, ສະຖາບັນຕ່າງໆ ທີ່ຂຶ້ນກັບກະ ຊວງ-ອົງການທຽບເທົ່າກະຊວງ ໃຫ້ປະກອບພະນັກງານ **5** ຄົນຂຶ້ນໄປ.
- ຄະນະກວດກາພັກ, ອົງການກວດກາລັດແຂວງ-ນະຄອນຫຼວງ ໃຫ້ປະກອບພະນັກງານ **25** ຄົນຂຶ້ນໄປ.
- ຄະນະກວດກາພັກ, ຂະແໜງກວດກາລັດ ຂອງບັນດາພະແນກການ, ອົງການທຽບເທົ່າພະແນກການ ຂອງແຂວງ-ນະຄອນຫຼວງ ໃຫ້ປະກອບພະນັກງານ **5** ຄົນຂຶ້ນໄປ.
- ຄະນະກວດກາພັກ, ພະແນກກວດກາລັດ ຂອງກອງບັນຊາການທະຫານແຂວງ ແລະ ກອງບັນຊາການ ປ້ອງກັນຄວາມສະຫງົບແຂວງ ໃຫ້ປະກອບພະນັກງານ **10** ຄົນຂຶ້ນໄປ.
- ຄະນະກວດກາພັກ ແລະ ອົງການກວດກາລັດເມືອງ, ເທດສະບານ, ນະຄອນ ໃຫ້ປະກອບພະນັກງານ **9** ຄົນຂຶ້ນໄປ.
- ຄະນະກວດກາພັກ ແລະ ໜ່ວຍງານກວດກາລັດ ຂອງຫ້ອງການ ແລະ ອົງການທຽບເທົ່າຫ້ອງການ ເມືອງ ໃຫ້ປະກອບພະນັກງານ **3** ຄົນຂຶ້ນໄປ.
- ຄະນະກວດກາພັກ ແລະ ໜ່ວຍງານກວດກາລັດບ້ານ ໃຫ້ປະກອບພະນັກງານຊ່ວຍວຽກ **3** ຄົນ.

**4.2. ມາດຖານ-ເງື່ອນໄຂ ຂອງຄະນະກວດກາພັກ ແລະ ຄະນະນຳອົງການກວດກາລັດແຕ່ລະຂັ້ນ:**

- ກຳແໜ້ນແນວທາງ, ທັດສະນະຂອງພັກ, ກົດໝາຍ, ລະບຽບການຂອງລັດ ແລະ ມີສະຕິເຄົາລົບກົດ ໝາຍສູງ.
- ເປັນຜູ້ມີທັດສະນະຫຼັກໝັ້ນການເມືອງໜັກແໜ້ນ, ມີຄຸນສົມບັດສິນທຳປະຕິວັດ, ສັດຊື່ບໍລິສຸດ, ບໍ່ສໍ້ ລາດບັງຫຼວງ, ທ່ຽງທຳ, ຮອບຄອບ, ພາວະວິໄສ ກ້າຕໍ່ສູ້ ແລະ ຕ້ານກັບບັນດາປະກົດການຫຍໍ້ທໍ້ຕ່າງໆ, ມີຄວາມ ເຂັ້ມງວດຕໍ່ລະບຽບຂອງພັກ ແລະ ກົດໝາຍຂອງລັດ.
- ມີທັດສະນະມະຫາຊົນຖືກຕ້ອງ, ສົນໃຈຟັງຄຳຄິດຄຳເຫັນຂອງມະຫາຊົນ, ຮູ້ເລືອກເຟັ້ນເອົາຄຳເຫັນທີ່ ຖືກຕ້ອງ ມີເຫດຜົນຂອງມະຫາຊົນ ແລະ ຮູ້ສະຫຼຸບສັງລວມຕາມຄວາມ ເປັນຈິງ.
- ປະຕິບັດຫຼັກການລວມສູນປະຊາທິປະໄຕຢ່າງເຂັ້ມງວດ, ປຶກສາຫາລື ແລະ ຕົກລົງວຽກງານເປັນໝູ່ຄະ ນະ, ມີການຕິດຕາມກວດກາຕິດແທດກັບຕົວຈິງ; ເປັນຜູ້ກ້າຫານ, ກ້າຄິດ, ກ້າເຮັດ ແລະ ກ້າຮັບຜິດຊອບ.

**4.3. ມາດຖານ-ເງື່ອນໄຂ ຂອງພະນັກງານກວດກາອາຊີບ ແຕ່ຂັ້ນເມືອງຂຶ້ນໄປ:**

- ມີຄວາມຈົງຮັກພັກດີຕໍ່ປະເທດຊາດ, ມີທັດສະນະຫຼັກໝັ້ນການເມືອງ, ມີຄຸນສົມບັດສິນທຳປະຕິວັດ, ສັດຊື່, ບໍ່ສວຍໂອກາດສໍ້ລາດບັງຫຼວງ; ປົກປ້ອງ ແລະ ເຂັ້ມງວດໃນການປະຕິບັດກົດລະບຽບຂອງພັກ, ກົດໝາຍຂອງລັດ.

- ມີລະດັບຄວາມຮູ້ດ້ານວິຊາສະເພາະໃດໜຶ່ງແຕ່ຊັ້ນກາງຂຶ້ນໄປ, ຕ້ອງໄດ້ຜ່ານການຝຶກອົບຮົມວຽກງານວິຊາສະເພາະກວດກາໄລຍະສັ້ນ.

- ມີສະຕິຕໍ່ການຈັດຕັ້ງສູງມີຄວາມຮັບຜິດຊອບຕໍ່ວຽກງານທີ່ໄດ້ຮັບມອບໝາຍ, ກ້າຫານ, ເດັດຂາດ, ບໍ່ປະ ນີ ປະນອມ, ເບິ່ງບັນຫາເລິກເຊິ່ງ, ຮອບຄອບ, ບໍ່ລຳອຽງ, ບໍ່ອະຄະຕິ, ຮູ້ໄຈ້ແຍກຂໍ້ມູນຫຼັກຖານ ແລະ ເຮັດວຽກຕິດ ແທດກັບຕົວຈິງ;ຕັດສິນບັນຫາ ຢ່າງພາວະວິໄສ, ເປັນແບບຢ່າງໃນການປະຕິບັດກົດໝາຍ, ລະບຽບການຕ່າງໆ, ຮັກ ສາຄວາມລັບທາງດ້ານວິຊາສະເພາະ, ເດັດດ່ຽວຕ້ານທຸກປະກົດການສວຍໂອກາດສໍ້ລາດບັງຫຼວງ,

- ບໍ່ເຄີຍຖືກປະຕິບັດວິໄນຂັ້ນປົດຕຳແໜ່ງ ຫຼືອອກຈາກລັດຖະການ ຫຼືຖືກສານຕັດສິນລົງໂທດທາງອາຍາ.

- ມີສຸຂະພາບແຂງແຮງ.

**5. ແບບແຜນວິທີເຮັດວຽກ ຂອງຄະນະກວດກາແຕ່ລະຂັ້ນ:**
**ໃຫ້ປັບປຸງແບບແຜນວິທີເຮັດວຽກ ຂອງຄະນະກວດກາແຕ່ລະຂັ້ນເປັນຕົ້ນ:**

- ເຄົາລົບ ແລະ ປະຕິບັດຫຼັກການລວມສູນປະຊາທິປະໄຕ, ນຳພາເປັນໝູ່ຄະນະ, ແບ່ງງານໃຫ້ບຸກຄົນຈະແຈ້ງ ແລະ ມີລະບຽບວິໄນເຂັ້ມງວດ.

- ເຮັດວຽກມີແຜນການ, ໂຄງການ, ມີຈຸດສຸມ, ມີການຕິດຕາມ-ກວດກາ ແທດເຖິງຕົວຈິງ.

- ປະຕິບັດລະບອບປະຊຸມ, ສະຫຼຸບຖອດຖອນບົດຮຽນ ແລະ ລາຍງານຂັ້ນເທິງຂອງຕົນ ເປັນປົກກະຕິ.

## IV. ວິທີຈັດຕັ້ງປະຕິບັດ.

**1.** ຄະນະກວດກາສູນກາງພັກ ຈັດກອງປະຊຸມເຜີຍແຜ່, ແນະນຳ-ເຊື່ອມຊຶມບົດແນະນຳ ສະບັບນີ້ໃຫ້ບັນດາກະຊວງ-ອົງການທຽບເທົ່າກະຊວງ, ແຂວງ ແລະ ນະຄອນຫຼວງ ເພື່ອນຳໄປຈັດຕັ້ງຜັນຂະຫຍາຍ.

**2.** ມອບໃຫ້ຄະນະພັກ, ອົງການປົກຄອງ ແລະ ຄະນະກວດກາແຕ່ລະຂັ້ນ ຄົ້ນຄວ້າກຳແໜ້ນ, ເຊື່ອມຊຶມ ແລະ ຈັດຕັ້ງເຜີຍແຜ່ເນື້ອໃນບົດແນະນຳສະບັບນີ້ ໃຫ້ທຸກການຈັດຕັ້ງຂອງພັກ, ລັດ, ບັນດາອົງການຈັດຕັ້ງມະຫາຊົນ, ລັດວິສາຫະກິດ ແລະ ການຈັດຕັ້ງອື່ນໆ ຂອງພັກ-ລັດ ຕະຫຼອດຮອດສະມາຊິກພັກ, ພະນັກງານທີ່ຂຶ້ນກັບຄວາມຮັບຜິດຊອບຂອງຕົນ ໃຫ້ຮັບຮູ້ເຂົ້າໃຈຢ່າງເລິກເຊິ່ງ.

**3.** ຄະນະພັກ ຄະນະນຳແຕ່ລະຂັ້ນຊີ້ນຳ-ນຳພາ ຄະນະກວດກາພັກ, ອົງການກວດກາລັດຂັ້ນຕົນ ຄົ້ນຄວ້າ ແລະ ດຳເນີນປັບປຸງກົງຈັກການຈັດຕັ້ງ ຂອງຄະນະກວດກາພັກ, ອົງການກວດກາລັດ ແລະ ຕ້ານການສໍ້ລາດບັງຫຼວງຕາມເນື້ອໃນບົດແນະນຳສະບັບ ນີ້ໃຫ້ຖືກຕ້ອງ, ເກີດຜົນເປັນຈິງ ແລະ ໄດ້ຮັບຜົນດີ.

**4.** ຄະນະກວດກາພັກ ແລະ ອົງການກວດກາລັດ ແຕ່ລະຂັ້ນ ຕ້ອງເປັນເຈົ້າການຄົ້ນຄວ້າກຳແໜ້ນ ແລະ ດຳເນີນການປັບປຸງການຈັດຕັ້ງ ,ພາລະບົດບາດ, ໜ້າທີ່-ສິດ ແລະ ບຸກຄະລາກອນຂອງຕົນໃຫ້ຖືກຕ້ອງຕາມບົດແນະ ນຳສະບັບນີ້ ໂດຍມີການປະສານສົມທົບກົມ ຈັດຕັ້ງ, ຄະນະຈັດຕັ້ງ, ພະແນກພາຍໃນ ແລະ ພາກສ່ວນກ່ຽວຂ້ອງ ອື່ນໆ ເຮັດໃຫ້ຄະນະກວດກາພັກ, ກວດກາລັດຂັ້ນຂອງຕົນມີຄວາມເຂັ້ມແຂງສາມາດເປັນເສນາທິການຊ່ວຍຄະນະ ພັກ ແລະ ອົງການປົກຄອງຂັ້ນຂອງຕົນ ຢ່າງມີປະສິດທິພາບ.

**5.** ຜ່ານການຈັດຕັ້ງປະຕິບັດ ບົດແນະນຳສະບັບນີ້ ໃຫ້ມີການປະເມີນ, ຖອດຖອນບົດຮຽນ, ລາຍງານປົກກະຕິ ຕໍ່ຄະນະພັກ ຂັ້ນຂອງຕົນ ແລະ ຄະນະກວດກາຂັ້ນເທິງຂອງຕົນ.

ບົດແນະນຳສະບັບນີ້ປ່ຽນແທນ ບົດແນະນຳສະບັບເລກທີ **527**/ຄກສພ, ລົງວັນທີ **16** ທັນວາ **2013**; ເນື້ອໃນບົດແນະນຳ ການປັບປຸງກົງຈັກການຈັດຕັ້ງ ຂອງຄະນະກວດກາສູນກາງ ພັກຜ່ານມາທີ່ຂັດກັບເນື້ອໃນບົດແນະນຳສະບັບນີ້ ແມ່ນຖືກລົບລ້າງ.

**ປະທານ**

**ຄະນະກວດກາສູນກາງພັກ**